**Asian Productivity Organization**
**"The APO in the News"**

Name of publication: Lao Economic Daily Newspaper (12 January, 2015, Lao)

Page: B2

# ອາຫານໃຫ້ມີຄຸນນະພາບ

ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (ກສວ) ກະຊວງອຸດສາຫະກຳ ແລະ ການຄ້າ (ອຄ) ຮ່ວມກັບກະຊວງກະສິກຳ-ປ່າໄມ້ ແລະ ການປະມົງ ປະເທດຍີ່ປຸ່ນ ແລະ ອົງການຜະລິດຕະພາບແຫ່ງອາຊີ ຈັດກອງປະຊຸມສຳມະນາວຽກງານການຄຸ້ມຄອງຕ່ອງໂສ້ການສະໜອງອາຫານທີ່ມີຄຸນນະພາບຂຶ້ນເພື່ອສົ່ງເສີມສ້າງຄວາມຮູ້ໃຫ້ພາກລັດ ແລະ ພາກທຸລະກິດໃນການຄຸ້ມຄອງອາຫານທີ່ປອດໄພໃຫ້ໄດ້ມາດຖານສາກົນຂອງຮັບການເຊື່ອມໂຍງເສດຖະກິດ.

ທ່ານ ສົມດີ ອິນມີໄຊ ຫົວໜ້າກົມ ກສວ ກະຊວງ ອຄ ໄດ້ກ່າວວ່າ: ການສຳມະນາຄັ້ງນີ້ ເພື່ອສົ່ງເສີມ ແລະ ສ້າງຄວາມຮັບຮູ້ໃນ ສປປ ລາວ ກ່ຽວກັບຄວາມສຳຄັນຂອງທຸລະກິດກະສິກຳ ແລະ ປະສິດທິພາບຂອງການຄຸ້ມຄອງຕ່ອງໂສ້ການສະໜອງອາຫານເປັນຕົ້ນແມ່ນລະບົບການຄຸ້ມຄອງອາຫານປອດໄພທີ່ທັນສະໄໝ ເຊັ່ນ: ລະບົບວິເຄາະ ແລະ ຄວບຄຸມຈຸດວິກິດ HACCP ແລະ ລະບົບຄຸ້ມຄອງອາຫານປອດໄພຕາມມາດຕະຖານສາກົນ ISO 22000. ພ້ອມດຽວກັນນັ້ນ, ເພື່ອແລກປ່ຽນປະສົບການ ແລະ ກໍລະນີສຶກສາທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດໂຄງການຕົວແບບຂອງບໍລິສັດຕົວແບບ ແລະ ຊ່ຽວຊານທີ່ປຶກສາຂອງ ກສວ, ຮ່ວມພິຈາລະນາຍຸດທະສາດການຄຸ້ມຄອງຕ່ອງໂສ້ການສະໜອງອາຫານໃນຂະແໜງປຸງແຕ່ງອາຫານ ແລະ ຂະແໜງຍ່ອຍໃນທຸລະກິດກະສິກຳ.

ທ່ານກ່າວຕື່ມອີກວ່າ: ພາຍໃຕ້ການຮ່ວມມືດັ່ງກ່າວໃນໄລຍະຜ່ານມາ ພວກເຮົາໄດ້ສຳເລັດການສຳມະນາໃນຫຼາຍຫົວຂໍ້ເປັນຕົ້ນແມ່ນການຝຶກອົບຮົມວິທະຍາການຫຼັງເກັບກ່ຽວສຳລັບເຂົ້າ, ໂຄງການສ້າງບໍລິສັດຕົວແບບດ້ານ 5 ສ ແລະ ຫຼັກການຜະລິດທີ່ດີ, ໂຄງການສ້າງບໍລິສັດຕົວແບບດ້ານ HACCP, ການສ້າງປື້ມຄູ່ມືການວິເຄາະ ແລະ ຄວບຄຸມຈຸດວິກິດ ສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ບັນດາໂຄງການອື່ນໆ.

ທ່ານ ມິດຊູໂອະ ນາກາມູລະ ວິຊາການໂຄງການພະແນກກະສິກຳອົງການຜະລິດຕະພາບແຫ່ງອາຊີ ໄດ້ກ່າວວ່າ: ວຽກງານດັ່ງກ່າວນັ້ນມີຄວາມສຳຄັນ ເພື່ອຄ້ຳປະກັນດ້ານຄຸນນະພາບອາຫານ, ຂະບວນການຜະລິດ, ການຈັດການສິ່ງທ້າທາຍຕ່າງໆດ້ວຍຕົວເອງ ພ້ອມດຽວກັນກໍ່ເປັນການສ້າງໃຫ້ພາກທຸລະກິດມີຄວາມເຂັ້ມແຂງ ເພາະວ່າຖ້າຫາກຄຸນນະພາບຂອງຜະລິດຕະພັນໃດໜຶ່ງທີ່ໂຮງງານຜະລິດອອກມາດີສັງຄົມຍອມຮັບຕະຫຼາດມີຄວາມຕ້ອງການສູງກໍ່ສາມາດຍາດແຍ່ງແຂ່ງຂັນໃນການເຊື່ອມໂຍງເສດຖະກິດໄດ້.

ກອງປະຊຸມສຳມະນາ ໄດ້ຈັດຂຶ້ນໃນວັນທີ 8 ທັນວາຜ່ານມາ ທີ່ໂຮງແຮມລ້ານຊ້າງ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ສົມດີ ອິນມີໄຊ ຫົວໜ້າກົມ ກສວ ກະຊວງ ອຄ, ທ່ານ ມິດຊູໂອະ ນາກາມູລະ ວິຊາການໂຄງການພະແນກກະສິກຳອົງການຜະລິດຕະພາບແຫ່ງອາຊີ ມີພະນັກງານວິຊາການທີ່ກ່ຽວຂ້ອງ, ຫົວໜ່ວຍທຸລະກິດປຸງແຕ່ງອາຫານເຂົ້າຮ່ວມ.



ພຣະທາດຍຽງຕຶງ ພຣະທາດອົງສັກສິດຂອງຊາວເມືອງ
ຫາດຫຼວງ ວຽງຈັນ.